**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ................/ລບ

ນະຄອນຫຼວງວຽງຈັນ, ວັນທີ....................

**"ຮ່າງ"**

# ດຳລັດ

## ວ່າດ້ວຍການສົ່ງເສີມປູກໄມ້ເປັນສິນຄ້າແລະ ປົກປັກຮັກສາສິ່ງແວດລ້ອມ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 96/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ **ສະບັບປັບປຸງ** ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ຍຸດທະສາດປ່າໄມ້ຮອດປີ 2020 ຂອງ ສປປ ລາວ;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ.........../ກປ, ລົງວັນທີ........

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດນະໂຍບາຍ, ຫຼັກການ ແລະ ມາດຕະການ ເພື່ອຊຸກຍູ້ສົ່ງເສີມ ບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສິ່ງແວດລ້ອມ ແນໃສ່ເພີ່ມທະວີຄວາມປົກຫຸ້ມຂອງປ່າໄມ້ ປະກອບສ່ວນເຂົ້າໃນການພັດທະນາ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການປູກໄມ້ເປັນສິນຄ້າ**

ການປູກໄມ້ເປັນສິນຄ້າ ແມ່ນການປູກຊະນິດພັນໄມ້ທີ່ຕະຫຼາດຕ້ອງການ, ມີປະລິມານຫຼາຍ ແລະ ນຳໃຊ້ເຕັກນິກວິທະຍາສາດ ເຂົ້າໃນການປູກ ເພື່ອຂາຍເປັນສິນຄ້າ ແລະ ສະໜອງວັດຖຸດິບ ເຂົ້າໃນການປຸງແຕ່ງເປັນຜະລິດຕະພັນ ສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ , ສ້າງລາຍຮັບ ແລະຮັບປະກັນຄວາມຕ້ອງການຂອງຕະຫຼາດຢ່າງຕໍ່ເນື່ອງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 3 ການປູກໄມ້ ເພື່ອປົກປັກຮັກສາສິ່ງແວດລ້ອມ**

ການປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ ແມ່ນການປູກໄມ້ເພື່ອປົກຄຸມດິນ, ປ້ອງກັນການເຊາະເຈື່ອນຂອງດິນ, ປ້ອງກັນໄພພິບັດທາງທຳມະຊາດ, ປົກປັກຮັກສາແຫຼ່ງນ້ຳ ເພື່ອ ຮັກສາລະບົບນິເວດ, ພະລັງງານ ແລະ ການທ່ອງທ່ຽວທຳມະຊາດ, ທັງເປັນການສະສົມເກັບກັກປະລິມານທາດກາກບອນຂອງປ່າໄມ້, ຫຼຸດຜ່ອນ ແລະ ຈຳກັດທາດອາຍພິດເຮືອນແກ້ວ ຢູ່ໃນຊັ້ນບັນຍາກາດ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບ ທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການປູກໄມ້** ໝາຍເຖິງ ການນຳເອົາແກ່ນໄມ້ໄປຫວ່ານ, ເອົາເບ້ຍໄມ້ທີ່ໄດ້ຈາກປ່າທຳມະຊາດ ແລະ ເຫງົ້າໄມ້ ຫຼື ເບ້ຍໄມ້ຈາກສວນກ້າໄປປູກໃສ່ເນື້ອທີ່ດິນທີ່ເປັນກຳມະສິດ ຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ທີ່ດິນຂອງລັດ ທີ່ເປັນປ່າຊຸດໂຊມ, ດິນເປົ່າຫວ່າງ, ດິນປອກໂຫຼ້ນ ແລະ ດິນປ່າໄມ້ທີ່ລັດໄດ້ຈັດສັນໃຫ້;

2. **ສວນປູກໄມ້ແບບເປັນລະບົບ** ໝາຍເຖິງ ພື້ນທີ່ທີ່ມີຂະໜາດ ໜຶ່ງໄລ່ ຫຼື ໜຶ່ງພັນຫົກຮ້ອຍ ຕາແມັດ ຂຶ້ນໄປ ທີ່ໄດ້ປູກໄມ້ຖືກຕ້ອງຕາມເຕັກນິກວິຊາການ ;

3. **ສວນປູກໄມ້ແບບກະແຈກກະຈາຍ** ໝາຍເຖິງ ສວນປູກໄມ້ ທີ່ມີເນື້ອທີ່ ໜ້ອຍກວ່າ ໜຶ່ງພັນຫົກຮ້ອຍ ຕາແມັດ ຫຼື ປູກຕາມແຄມທາງ, ແຄມນາ, ແຄມຮົ້ວ, ແຄມສວນ, ແຄມບ້ານ ແລະ ສະຖານທີ່ຕ່າງໆ;

4. **ໄມ້ປູກ** ໝາຍເຖິງ ຕົ້ນໄມ້ທຸກຊະນິດທີ່ໄດ້ປູກເປັນສວນ ຊຶ່ງລວມທັງ ການປູກເປັນລະບົບ ແລະ ປູກແບບກະແຈກກະຈາຍ;

5. **ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດເພື່ອປູກໄມ້** ໝາຍເຖິງ ການນຳໃຊ້ທີ່ດິນປ່າໄມ້ທີ່ລັດໄດ້ ຕົກລົງອະນຸມັດ ເພື່ອດຳເນີນກິດຈະການປູກໄມ້ຕາມສັນຍາ.

**ມາດຕາ 5 ຫຼັກການລວມກ່ຽວກັບການປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ**

ການປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ຕ້ອງປະຕິບັດຕາມຫຼັກການຕົ້ນຕໍດັ່ງນີ້:

1. ຮັບປະກັນ ການສົ່ງເສີມວຽກງານປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ;

2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຍຸດທະສາດປ່າໄມ້ ແລະ ແຜນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃນແຕ່ລະໄລຍະ;

3. ການເຊົ່າ ຫຼື ສຳປະທານທີ່ດິນ ເພື່ອປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ຕ້ອງປະຕິບັດຫຼັກການປະຕູດຽວ ໂດຍດຳເນີນການຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ຮັບປະກັນຜົນປະໂຫຍດຂອງ ລັດ, ການຈັດຕັ້ງ ແລະ ບຸກຄົນ ບົນພື້ນຖານກົດໝາຍ ແລະ ລະບຽບການ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ທີ່ດຳເນີນກິດຈະການປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມຢູ່ ສປປ ລາວ.

## ໝວດທີ 2
## ການສົ່ງເສີມປູກໄມ້ເປັນສິນຄ້າແລະ ປົກປັກຮັກສາສິ່ງແວດລ້ອມ

**ມາດຕາ 7 ການສົ່ງເສີມປູກໄມ້ເປັນສິນຄ້າ**

ເພື່ອເຮັດໃຫ້ອຸດສາຫະກຳປຸງແຕ່ງໄມ້ ມີຄວາມຍືນຍົງ, ມີວັດຖຸດິບສະໜອງຢ່າງຕໍ່ເນື່ອງ, ສາມາດສ້າງລາຍຮັບ ແລະ ມູນຄ່າເພີ່ມ, ລັດຖະບານ ມີນະໂຍບາຍສົ່ງເສີມການປູກໄມ້ເປັນສິນຄ້າ ດັ່ງນີ້:

1. ອຳນວຍຄວາມສະດວກໃຫ້ແກ່ການລົງທຶນປູກໄມ້ ຫຼື ເຈົ້າຂອງສວນປູກໄມ້ ໂດຍການສະໜອງຂໍ້ມູນຂ່າວສານດ້ານການຕະຫຼາດ ສຳລັບຜະລິດຕະພັນໄມ້ປູກ ແລະ ໃຫ້ຄຳແນະນຳດ້ານເຕັກນິກວິຊາການໃນການປູກ, ປົກປັກຮັກສາ, ຂຸດຄົ້ນ, ຂົນສົ່ງ ແລະ ການປຸງແຕ່ງເປັນຜະລິດຕະພັນ;

2. ຍົກເວັ້ນຄ່າທຳນຽມການນຳໃຊ້ທີ່ດິນ ສະເພາະສວນປູກໄມ້ ທີ່ໄດ້ຮັບການຂຶ້ນທະບຽນ ຢ່າງຖືກຕ້ອງ. ສຳລັບທີ່ດິນທີ່ລັດອະນຸຍາດໃຫ້ສຳປະທານ ແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ໃນແຕ່ລະໄລຍະ;

3. ການຕັດໄມ້ຈາກສວນປູກເພື່ອເປັນສິນຄ້າ ໃຫ້ຍົກເວັ້ນຄ່າບູລະນະປ່າໄມ້ ແລະ ຄ່າຊັບພະຍາກອນປ່າໄມ້ ແຕ່ໃຫ້ເສຍອາກອນລາຍໄດ້, ສຳລັບການຕັດເພື່ອການໃຊ້ສອຍໃນຄອບຄົວ ແລະ ສິ່ງສາທາລະນະປະໂຫຍດ ແມ່ນໃຫ້ຍົກເວັ້ນທັງໝົດ ;

4. ສວນປູກໄມ້ ແລະ ໄມ້ປູກ ທີ່ໄດ້ຮັບການຂຶ້ນທະບຽນ ແລະ ຢັ້ງຢືນຢ່າງຖືກຕ້ອງຕາມລະບຽບການ ສາມາດມອບໂອນ, ສືບທອດ ແລະ ເປັນຫຼັກຊັບຄ້ຳປະກັນໄດ້;

5. ທົດແທນຄ່າເສຍຫາຍ ໃຫ້ ແກ່ເຈົ້າຂອງສວນປູກໄມ້ ທີ່ຂຶ້ນທະບຽນຢ່າງຖືກ ຕ້ອງ ໃນກໍລະນີທີ່ລັດຕ້ອງການນຳໃຊ້ທີ່ດິນຕອນດັ່ງກ່າວເພື່ອເປົ້າໝາຍອື່ນ;

6. ສົ່ງເສີມໃຫ້ມີການສ້າງຕັ້ງກຸ່ມ ຫຼື ສະມາຄົມຜູ້ປູກໄມ້ ແລະ ສະມາຄົມປຸງແຕ່ງໄມ້ປູກ ໂດຍມີສັນຍາຜູກພັນໃນການສະໜອງວັດຖຸດິບ ຢ່າງເປັນລະບົບຕ່ອງໂສ້ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ;

7. ຊຸກຍູ້ບັນດາໂຮງງານປຸງແຕ່ງໄມ້ທີ່ເປັນສະມາຊິກຂອງສະມາຄົມປຸງແຕ່ງໄມ້ລາວ ແລະ ສະມາຄົມເຟີນີເຈີໄມ້ລາວ ຍົກລະດັບສະມັດຕະພາບຂອງໂຮງງານ ໃຫ້ໄດ້ມາດຕະຖານ ເພື່ອຮອງຮັບການປຸງແຕ່ງເປັນຜະລິດຕະພັນທີ່ສາມາດເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ;

8. ຊຸກຍູ້ທະນາຄານ ປ່ອຍສິນເຊື່ອໄລຍະຍາວ ເພື່ອສົ່ງເສີມການລົງທຶນປູກໄມ້ ໂດຍການກຳນົດດອກເບ້ຍທີ່ເໝາະສົມ ແລະ ຍົກເວັ້ນດອກເບ້ຍໃນໄລຍະທີ່ຍັງບໍ່ທັນສາມາດເກັບກູ້ຜົນຜະລິດ;

9. ສົ່ງເສີມປະຊາຊົນ ແລະ ຜູ້ປະກອບການ ລົງທຶນປູກໄມ້ພື້ນເມືອງ ແລະ ຊະນິດ ທີ່ບໍ່ແມ່ນພັນໄມ້ພື້ນເມືອງໃສ່ໃນເຂດປ່າຊຸດໂຊມ ຊຶ່ງນອນໃນເຂດປ່າຜະລິດ ແລະ ເຂດທີ່ບໍ່ໄດ້ຈັດສັນເຂົ້າໃນສາມປະເພດປ່າ ທີ່ລັດຈັດສັນໃຫ້ ໂດຍມີການແບ່ງປັນຜົນປະໂຫຍດ ຢ່າງສົມເຫດສົມຜົນ ລະຫວ່າງ ລັດ, ຜູ້ປະກອບການ ແລະ ປະຊາຊົນ;

10. ອະນຸຍາດໃຫ້ຜູ້ປະກອບການ ນຳເຂົ້າແນວພັນໄມ້ ຫຼື ເບ້ຍໄມ້ເພື່ອມາປູກຢູ່ພາຍໃນ ບົນພື້ນຖານການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ສົ່ງເສີມໃຫ້ຜູ້ປະກອບການ ມີສ່ວນຮ່ວມ ແລະ ດຳເນີນການຄົ້ນຄວ້າ ກ່ຽວກັບການຂະຫຍາຍແນວພັນໄມ້ ແລະ ການຈະເລີນເຕີບໂຕຂອງໄມ້ ໂດຍໃຫ້ບູລິມະສິດຊະນິດພັນໄມ້ພື້ນເມືອງ;

12. ອົງການປົກຄອງບ້ານ ອອກໃບຢັ້ງຢືນຮັບຮູ້ກຳມະສິດຕົ້ນໄມ້ທຳມະຊາດ ທີ່ເກີດຢູ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຄຸ້ມຄອງ ແລະ ປົກປັກຮັກສາ ດ້ວຍເຫື່ອແຮງ ແລະ ທຶນຮອນຂອງຕົນເອງ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ສ່ວນການນຳໃຊ້ ແລະ ຊື້ຂາຍ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ;

13. ການຕັດ ແລະ ເຄື່ອນຍ້າຍໄມ້ປູກ ທີ່ບໍ່ແມ່ນຊະນິດພັນໄມ້ພື້ນເມືອງ ເຊັ່ນ: ໄມ້ວິກ, ໄມ້ກະຖິນນະລົງ, ໄມ້ກະຖິນເທພາ, ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນສວນປູກແລ້ວ ແມ່ນສາມາດດຳເນີນໄດ້ເລີຍ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ, ແຕ່ຕ້ອງໄດ້ລາຍງານຕົວເລກໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຮັບຊາບ ເພື່ອເກັບກຳຂໍ້ມູນ, ສຳລັບໄມ້ປູກທີ່ເປັນຊະນິດພັນໄມ້ພື້ນເມືອງ ຕ້ອງຂໍອະນຸຍາດຕັດ ແລະ ເຄື່ອນຍ້າຍຈາກຜ່ານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອສະເໜີ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນຜູ້ອະນຸຍາດ;

14. ການເຄື່ອນຍ້າຍໄມ້ປູກ ຫຼື ຜະລິດຕະພັນໄມ້ປູກຕາມເສັ້ນທາງ ບໍ່ໃຫ້ຮຽກເກັບຄ່າທຳນຽມ ຫຼື ຄ່າບໍລິການຕ່າງໆ ນອກຈາກທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

15. ການສົ່ງອອກໄມ້ປູກ ແລະ ຜະລິດຕະພັນໄມ້ປູກໄປຕ່າງປະເທດ ແມ່ນສາມາດສົ່ງອອກໄດ້ ບົນພື້ນຖານ ມາດຕະຖານ ຂອງຜະລິດຕະພັນເຄິ່ງສຳເລັດຮູບ ແລະ ຜະລິດຕະພັນສຳເລັດຮູບ ທີ່ລັດຖະບານໄດ້ກຳ

ນົດໃນແຕ່ລະໄລຍະ.

**ມາດຕາ 8 ການສົ່ງເສີມປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ**

ເພື່ອຮັບປະກັນ ໃຫ້ແກ່ການພັດທະນາ ຕາມທິດສີຂຽວ ແລະ ຍືນຍົງ ລັດຖະບານ ມີນະໂຍບາຍສົ່ງເສີມການປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ ດັ່ງນີ້:

1. ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ລົງທຶນໃສ່ການຄຸ້ມຄອງ, ການປົກປັກຮັກສາ, ພັດທະນາ, ຟື້ນຟູບູລະນະປ່າໄມ້ທຳມະຊາດ ແລະ ປູກໄມ້ ເພື່ອປົກປັກຮັກສາສິ່ງແວດລ້ອມ ໃສ່ເຂດປ່າຊຸດໂຊມ ຊຶ່ງນອນໃນເຂດປ່າປ້ອງກັນ ແລະ ປ່າສະຫງວນ ໂດຍຕິດພັນກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແນໃສ່ປົກປັກຮັກສາເຂດຍອດນ້ຳ, ປ່າແຫຼ່ງນ້ຳ, ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ລວມທັງການຈັດສັນອາຊີບໝັ້ນຄົງ;

2. ອະນຸຍາດໃຫ້ ປະຊາຊົນ ແລະ ຜູ້ປະກອບການ ປູກໄມ້ປະສົມປະສານກັບພືດກະສິກຳ ແລະ ເຄື່ອງປ່າຂອງດົງ ໃສ່ເຂດປ່າຊຸດໂຊມ ຊຶ່ງນອນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ທີ່ລັດໄດ້ຈັດສັນໃຫ້ ໂດຍການຕອບສະໜອງຄ່າແຮງງານ ໃນການປູກ ແລະ ປົກປັກຮັກສາໄມ້ປູກ, ສ່ວນຜົນຜະລິດພືດກະສິກຳ ແລະ ເຄື່ອງປ່າຂອງດົງ ເປັນກຳມະສິດຂອງຜູ້ປູກ;

3. ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຊົ່າ ຫຼື ສຳປະທານທີ່ດິນປ່າສະຫງວນ ແລະ ປ່າປ້ອງກັນ ເພື່ອປູກໄມ້ , ພັດທະນາເປັນສະຖານທີ່ທ່ອງທ່ຽວແບບອະນຸລັກ, ສະຖານທີ່ພັກຜ່ອນ, ບ່ອນຄົ້ນຄວ້າທົດລອງ, ສິນເຊື່ອກາກບອນ ແລະ ອື່ນໆ ທີ່ບໍ່ກະທົບເຖິງໂຄງສ້າງຂອງປ່າໄມ້ . ຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດພັນທະໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

4. ສົ່ງເສີມໃຫ້ ປະຊາຊົນ ແລະ ຜູ້ປະກອບການ ປູກໄມ້ໃສ່ຕາມແຄມທາງ, ແຄມນ້ຳ ແລະ ສະຖານທີ່ສາທາລະນະອື່ນໆ ໂດຍລັດຕອບສະໜອງ ຄ່າແຮງງານໃນການປູກ ແລະ ປົກປັກຮັກສາ;

5. ສົ່ງເສີມໃຫ້ ປະຊາຊົນ ແລະ ຜູ້ປະກອບການ ດຳເນີນການປູກໄມ້ ແລະ ຟື້ນຟູປ່າດ້ວຍທຳມະຊາດໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ເພື່ອປົກປັກຮັກສາປ່າໄມ້ ດ້ວຍຮູບການມອບເໝົາ ໂດຍແບ່ງປັນຜົນປະໂຫຍດຢ່າງສົມເຫດສົມຜົນ ແລະ ສະໜອງງົບປະມານໃນຮູບແບບສິນເຊື່ອດອກເບ້ຍຕ່ຳທີ່ເໝາະສົມ.

## ໝວດທີ 3
## ການຄຸ້ມຄອງວຽກງານ ປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ

**ມາດຕາ 9 ການຄຸ້ມຄອງວຽກງານປູກໄມ້ເປັນສິນຄ້າ**

ການຄຸ້ມຄອງວຽກງານປູກໄມ້ເປັນສິນຄ້າ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງລົງທຶນປູກໄມ້ເປັນສິນຄ້າ ໃສ່ເນື້ອທີ່ດິນທີ່ເປັນກຳມະສິດຖືກຕ້ອງຕາມກົດໝາຍ ແມ່ນສາມາດດຳເນີນໄດ້ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ;

2. ສວນປູກໄມ້ທີ່ມີເນື້ອທີ່ ໜຶ່ງພັນຫົກຮ້ອຍ ຕາແມັດ ຂຶ້ນໄປ ຕ້ອງຂຶ້ນທະບຽນ, ສ່ວນໄມ້ປູກທີ່ມີເນື້ອທີ່ຕ່ຳກວ່າ ໜຶ່ງພັນຫົກຮ້ອຍ ຕາແມັດ ຫຼື ປູກກະແຈກກະຈາຍ ຕ້ອງໄດ້ຮັບການ ຢັ້ງຢືນ ເພື່ອຮັບຮູ້ ກຳມະສິດ ຕາມລະບຽບການ ດັ່ງນີ້:

– ອົງການປົກຄອງບ້ານ ເປັນຜູ້ອອກໃບຢັ້ງຢືນໄມ້ປູກທີ່ປູກເປັນລະບົບ ໃນຮູບແບບສວນປູກທີ່ມີເນື້ອທີ່ຕ່ຳກວ່າ ໜຶ່ງພັນຫົກຮ້ອຍ ຕາແມັດ, ປູກ ແບບກະແຈກກະຈາຍ ຫຼື ຕົ້ນໄມ້ທຳມະຊາດທີ່ເກີດຢູ່ດິນທີ່ເປັນກຳມະສິດ ຕາມກົດໝາຍ ແລະ ລະບຽບການ. ກໍລະນີມີເນື້ອທີ່ສວນປູກຫາກຕ່ຳກວ່າ ໜຶ່ງພັນຫົກຮ້ອຍ ຕາແມັດ ແຕ່ມີຫຼາຍຕອນຕິດຕໍ່ກັນເປັນສວນປູກ ສາມາດເອົາໃບຢັ້ງຢືນໄປສະເໜີຂຶ້ນທະບຽນສວນປູກໄດ້;

– ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ອອກໃບທະບຽນສວນປູກໄມ້ ທີ່ມີເນື້ອທີ່ແຕ່ ຫ້າ ເຮັກຕາ ລົງມາ;

– ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນຜູ້ອອກໃບທະບຽນສວນປູກໄມ້ ທີ່ມີເນື້ອທີ່ຫຼາຍກວ່າ ຫ້າ ເຮັກຕາ ຂຶ້ນໄປ ຕາມການສະເໜີ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

3. ການຕັດ ແລະ ເຄື່ອນຍ້າຍໄມ້ປູກ ທີ່ເປັນຊະນິດພັນໄມ້ພື້ນເມືອງ ແມ່ນພະແນກກະສິກາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນຜູ້ອະນຸຍາດ ຕາມການສະເໜີ ຂອງຫ້ອງການກະສິກກຳ ແລະ ປ່າໄມ້ເມືອງ. ສຳລັບການເຄື່ອນຍ້າຍ ຜະລິດຕະພັນໄມ້ປູກສຳເລັດຮູບ ແມ່ນຂະແໜງການອຸດສາຫະກຳ ແລະ ການຄ້າເປັນຜູ້ອະນຸຍາດ ບົນພື້ນຖານການຢັ້ງຢືນແຫຼ່ງທີ່ມາ ຈາກຂະແໜງການກະສິກຳ ແລະ ປ່າໄມ້;

4. ບັນດາໂຮງງານປຸງແຕ່ງໄມ້ ທີ່ນຳໃຊ້ໄມ້ເປັນວັດຖຸດິບເພື່ອປຸງແຕ່ງ ຕ້ອງປະຕິບັດພັນທະໃນການປູກໄມ້ ແລະ ຟື້ນຟູປ່າ ເພື່ອຮັບປະກັນວັດຖຸດິບສະໜອງໃຫ້ແກ່ການປຸງແຕ່ງ ຕາມທິດຍືນຍົງ;

5. ການເກັບຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບ ການດຳເນີນກິດຈະການປູກໄມ້ ແມ່ນໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໃນແຕ່ລະໄລຍະ.

**ມາດຕາ 10 ການ ຄຸ້ມຄອງວຽກງານປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ**

ການຄຸ້ມຄອງວຽກງານປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງປູກໄມ້ໃສ່ຕາມແຄມທາງ, ແຄມນ້ຳ ແລະ ສະຖານທີ່ສາທາລະນະ ແມ່ນສາມາດດຳເນີນໄດ້ ໂດຍມີສັນຍາ ຮ່ວມກັບເຈົ້າຂອງສະຖານທີ່ນັ້ນ. ສຳລັບການປູກໄມ້ໃສ່ທີ່ດິນປ່າຊຸດໂຊມໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ເພື່ອພັດທະນາເປັນສະຖານທີ່ທ່ອງທ່ຽວແບບອະນຸລັກ, ສະຖານທີ່ພັກຜ່ອນ, ບ່ອນຄົ້ນຄວ້າທົດລອງ, ສິນເຊື່ອກາກບອນ ແລະ ອື່ນໆ ຕ້ອງຂໍອະນຸຍາດເຊົ່າ ຫຼື ສຳປະທານຈາກລັດ ໂດຍດຳເນີນການຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງລົງທຶນປູກໄມ້ ແລະ ຟື້ນຟູປ່າ ເພື່ອປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ລະບຸໄວ້ໃນຂໍ້ 5 ມາດຕາ 8, ລັດຈະອອກໃບຢັ້ງຢືນ ແລະ ຮັບຮູ້ການລົງ ທຶນ ເພື່ອເປັນບ່ອນອີງໃນການແບ່ງປັນຜົນປະໂຫຍດ;

3. ບັນດາໂຄງການພັດທະນາພື້ນຖານໂຄງລ່າງ ລວມທັງໂຄງການທ່ອງທ່ຽວທຳມະຊາດ ທີ່ນຳໃຊ້ປ່າໄມ້, ສິ່ງຜົນກະທົບທາງລົບຕໍ່ປ່າໄມ້ ແລະ ໄດ້ຮັບຜົນປະໂຫຍດຈາກປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທັງທາງກົງ ແລະ ທາງອ້ອມ ຕ້ອງໄດ້ປະຕິບັດພັນທະ ໃນການ ຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູບູລະນະປ່າໄມ້ ແລະ ປູກໄມ້ໃນເຂດພື້ນທີ່ໄດ້ຮັບອະນຸຍາດສຳປະທານ ເພື່ອເຮັດໃຫ້ປ່າໄມ້ອຸດົມສົມບູນ ພ້ອມທັງປະກອບທຶນເຂົ້າກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ດັ່ງນີ້:

- ໂຄງການກໍ່ສ້າງເຂື່ອນໄຟຟ້າ ທີ່ນອນໃນສາມປະເພດປ່າ ຕ້ອງຈ່າຍ ໜຶ່ງສ່ວນຮ້ອຍ ຂອງມູນຄ່າການຂາຍກະແສໄຟຟ້າທັງໝົດໃນແຕ່ລະປີ;

- ໂຄງການບໍ່ແຮ່ ໃນໄລຍະການດຳເນີນໂຄງການ ຕ້ອງຈ່າຍ ໜຶ່ງສ່ວນຮ້ອຍ ຂອງລາຍຮັບໃນແຕ່ລະປີ. ສຳລັບເຂດທັນປ່ຽນຊົ່ວຄາວ, ເຂດຂຸດຄົ້ນແຮ່ທາດ ແລະ ຜະລິດຕະພັນອື່ນໆ ພາຍຫຼັງສຳເລັດໂຄງການ ຕ້ອງປັບແປງທີ່ດິນ ແລະ ປູກປ່າທົດແທນຄືນ ເພື່ອຟື້ນຟູໃຫ້ກາຍເປັນປ່າຄືນໃໝ່;

- ໂຄງການທ່ອງທ່ຽວທຳມະຊາດໃນເຂດປ່າປ້ອງກັນ ແລະ ປ່າສະຫງວນ ຫຼື ອ້ອມຂ້າງ ຕ້ອງຈ່າຍ ໜຶ່ງສ່ວນຮ້ອຍ ຂອງລາຍຮັບຈາກການທ່ອງທ່ຽວທຳມະຊາດໃນແຕ່ລະປີ;

- ໂຄງການຊົນລະປະທານ ຫຼື ອ່າງເກັບນ້ຳ ຕ້ອງຈັດສັນງົບປະມານໄວ້ ສຳລັບການຄຸ້ມຄອງ, ປູກປ່າ, ຟື້ນຟູ ແລະ ປົກປັກຮັກສາສິ່ງແວດລ້ອມໃນເຂດອ່າງໂຕ່ງ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການປະກອບສ່ວນເຂົ້າໃນວຽກງານປູກໄມ້, ຟື້ນຟູປ່າໄມ້, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 12 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະ ຖືກສຶກສາອົບຮົມ, ປະຕິບັດວິໄນ,ປັບໃໝ ຫຼື ລົງໂທດ ຕາມກົດໝາຍ ແລ້ວແຕ່ກໍລະນີໜັກ ຫຼື ເບົາ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 14 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແ ຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດ ວ່າດ້ວຍການສົ່ງເສີມປູກໄມ້ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ເລກທີ 96/ນຍ, ລົງວັນທີ 11 ມິຖຸນາ 2003.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**